ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການປົກຄອງແຂວງ

ເລກທີ.04.../ປຄປຂ

ອັດຕະປື, ວັນທີ:08 ມິຖຸນາ 2026

# ຄຳສັ່ງ

## ວ່າດ້ວຍ ການປ້ອງກັນ ແລະ ຄວບຄຸມພະຍາດລະບາດຕາມລະດູການ ໂດຍສະເພາະແມ່ນ ການແຜ່ລະບາດຂອງພະຍາດໝາກແດງ ແລະ ພະຍາດໄຂ້ຍຸງລາຍ ໃນປະຈຸບັນ

ເຖິງ:- ທ່ານ ຫົວໜ້າພະແນກການ, ອົງການທຽບເທົ່າພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກຊ-ປກສ ແຂວງ;

- ທ່ານ ປະທານຄະນະກຳມະການປົກຄອງເມືອງ 05 ຕົວເມືອງ;
- ພະນັກງານ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນ, ນັກສຶກສາ, ຜູ້ປະກອບການ, ປະຊາຊົນລາວບັນດາເຜົ່າ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ ແລະ ຊາວຕ່າງປະເທດທີ່ດຳລົງຊີວິດຢູ່ແຂວງອັດຕະປື.

- ອີງຕາມ ມາດຕາ 20, ຂໍ້ທີ 16 ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 78/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ໜັງສືສະເໜີຂອງພະແນກສາທາລະນະສຸກແຂວງ ສະບັບເລກທີ 244/ສທຂ, ລົງວັນທີ 01 ມິຖຸນາ 2026.

ໃນສະພາບປະຈຸບັນການລະບາດຂອງພະຍາດຕາມລະດູການແມ່ນມີທ່າອ່ຽງເພີ່ມຂຶ້ນ ໂດຍສະເພາະແມ່ນການລະບາດຂອງພະຍາດ ໝາກແດງ ແລະ ໄຂ້ຍຸງລາຍ ໃນແຕ່ລະວັນ ເຫັນວ່າ ມີທ່າອ່ຽງເພີ່ມຂຶ້ນເລື້ອຍໆ ປະຈຸບັນພະຍາດໝາກແດງ ມີຕົວເລກຄົນເຈັບ ສະສົມ 118 ກໍລະນີ, ກວມເອົາ 33 ບ້ານໃນ 04 ຕົວເມືອງ ແລະ ພະຍາດໄຂ້ຍຸງລາຍມີຕົວເລກຄົນເຈັບຕິດເຊື້ອ ສະສົມ 50 ກໍລະນີ, ກວມເອົາ 21 ບ້ານໃນ 05 ຕົວເມືອງ (ຂໍ້ມູນ ວັນທີ 27 ພຶດສະພາ 2026) ສະນັ້ນ ເປັນຕົວເລກທີ່ມີການເພີ່ມຂຶ້ນ ແລະ ມີທ່າອ່ຽງໃນການແຜ່ລະບາດໃນວົງກວ້າງ, ເພື່ອເປັນການປ້ອງກັນ ແລະ ຄວບຄຸມແຕ່ເບື້ອງຕົ້ນ, ບໍ່ໃຫ້ພະຍາດດັ່ງກ່າວເກີດການລະບາດ ແລະ ສາມາດຄວບຄຸມໄດ້ແຕ່ຫົວທີ ບັນດາອົງການຈັດຕັ້ງຂອງພາກລັດ, ເອກະຊົນ ຕະຫຼອດຮອດພໍ່ແມ່ປະຊາຊົນ ຕ້ອງມີສ່ວນຮ່ວມ ແລະ ປະກອບສ່ວນເຂົ້າໃນຂະບວນການກະກຽມ, ປ້ອງກັນ ແລະ ປະຕິບັດມາດຕະການຕອບໂຕ້ການລະບາດຂອງພະຍາດດັ່ງກ່າວ ໃນທົ່ວແຂວງອັດຕະປື;

## ປະທານຄະນະກຳມະການປົກຄອງແຂວງ ອອກຄຳສັ່ງ:

1. ມອບໃຫ້ພະແນກການອ້ອມຂ້າງແຂວງ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ - ປກສ ແຂວງ, ປະທານຄະນະກຳມະການປົກຄອງເມືອງ 05 ຕົວເມືອງ ສືບຕໍ່ເພີ່ມທະວີໂຄສະນາເຜີຍແຜ່, ສຶກສາອົບຮົມຢ່າງກວ້າງຂວາງ ແລະ ເລິກເຊິ່ງ ດ້ວຍຫຼາຍຮູບແບບ ແລະ ດ້ວຍວິທີການຕ່າງໆ ເພື່ອເຮັດໃຫ້ພະນັກງານທີ່ສັງກັດຢູ່ກົມ

ກອງ, ຊາວຕ່າງດ້າວ, ຜູ້ບໍ່ມີສັນຊາດ, ຊາວຕ່າງປະເທດ ຕະຫຼອດຮອດພໍ່ແມ່ປະຊາຊົນທີ່ຢູ່ໃນແຂວງອັດຕະປື ເຫັນໄດ້ໄພອັນລະຕາຍຂອງພະຍາດທີ່ເກີດຕາມລະດູການ ໂດຍສະເພາະແມ່ນພະຍາດໝາກແດງ, ພະຍາດໄຂ້ຍຸງລາຍ ແລະ ພະຍພະຍາດອື່ນໆ, ເພື່ອຮູ້ຈັກວິທີປ້ອງກັນ ແລະ ຄວບຄຸມພະຍາດດັ່ງກ່າວ ດ້ວຍຕົນເອງ ເພື່ອປົກປ້ອງສຸຂະພາບ ແລະ ຊີວິດຂອງປະຊາຊົນລາວ, ຄົນຕ່າງປະເທດ ທີ່ຢູ່ ສປປລາວ ກໍ່ຄື ຢູ່ແຂວງອັດຕະປື;

2. ມອບໃຫ້ພະແນກສາທາລະນະສຸກແຂວງ ສົມທົບກັບ ຄະນະກຳມະການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ໃນແຕ່ລະຂັ້ນ ເພື່ອຜັນຂະຫຍາຍ, ຊີ້ນຳ, ອຳນວຍຄວາມສະດວກ ແລະ ເອົາໃຈໃສ່ເປັນພິເສດ ຕໍ່ວຽກງານໂຄສະນາປະຊາສຳພັນ ແລະ ປຸກລະດົມ ໃຫ້ອົງການຈັດຕັ້ງທຸກພາກສ່ວນ, ສຳນັກງານອົງການ ທັງພາກລັດ ແລະ ເອກະຊົນພາຍໃນແຂວງ, ເມືອງ 05 ເມືອງ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າຢູ່ໃນແຕ່ລະບ້ານ ເພື່ອຜັນຂະຫຍາຍເອົາວຽກງານການປ້ອງກັນພະຍາດຕາມລະດູການ ໃຫ້ກາຍເປັນວຽກງານຂອງໝົດທຸກຄົນໃນສັງຄົມ ໂດຍສະເພາະແມ່ນພະຍາດໝາກແດງ ແລະ ພະຍາດໄຂ້ຍຸງລາຍ;
3. ມອບໃຫ້ຫ້ອງການຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນແຂວງ ປະສານງານກັບພາກສ່ວນຜູ້ປະກອບການທຸລະກິດເພື່ອຊ່ວຍອຳນວຍຄວາມສະດວກໃນການເຂົ້າຫາບໍລິສັດຜູ້ປະກອບການ ເປັນຕົ້ນບັນດາກຳມະກອນທີ່ມາຈາກຕ່າງແຂວງ, ຂໍ້ມູນກຸ່ມເປົ້າໝາຍເດັກນ້ອຍ, ແມ່ມານ, ສິ່ງອຳນວຍຄວາມສະດວກດ້ານວຽກງານສາທາລະນະສຸກ ໃຫ້ຄວາມຮ່ວມມືໃນວຽກງານສາທາລະນະສຸກໃນເວລາລົງເຄື່ອນໄຫວ;
4. ມອບໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ສະໜອງຂໍ້ມູນຈຳນວນບໍລິສັດຜູ້ປະກອບການ, ຈຳນວນກຳມະກອນພາຍໃນ ແລະ ຕ່າງປະເທດ, ກຳມະກອນມາຈາກຕ່າງແຂວງ ແລະ ປຶ້ມຕິດຕາມສຸຂະພາບ ເປັນຕົ້ນ: ບັດສັກຢາກັນພະຍາດ, ບັດກວດທ້ອງແມ່ມານ, ປຶ້ມກວດສຸຂະພາບ ແລະ ສະຫວັດດີການທາງດ້ານສຸຂະພາບເວລາເຈັບເປັນທີ່ມາປິ່ນປົວຢູ່ສະຖານທີ່ບໍລິການສາທາລະນະສຸກ;
5. ມອບໃຫ້ພະແນກສາທາລະນະສຸກແຂວງ ສືບຕໍ່ຊີ້ນຳບັນດາຂະແໜງການທີ່ກ່ຽວຂ້ອງ, ໂຮງໝໍແຂວງ, ໂຮງຮຽນສາທາລະນະສຸກແຂວງ, ຫ້ອງການສາທາລະນະສຸກເມືອງ 05 ເມືອງ, ຈຸດບໍລິການສາທາລະນະສຸກທັງພາກລັດ ແລະ ເອກະຊົນໃນທົ່ວແຂວງ ກະກຽມຄວາມພ້ອມ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນ ແລະ ຄວບຄຸມພະຍາດລະບາດ, ການປະສານງານວຽກງານເຝົ້າລະວັງ, ການລາຍງານກໍລະນີຕິດເຊື້ອ, ການຄຸ້ມຄອງກໍລະນີ, ການປິ່ນປົວກໍລະນີຕິດເຊື້ອຕາມຫຼັກວິຊາການ ພ້ອມທັງໂຄສະນາສຸຂະສຶກສາ ໃຫ້ຄວາມຮູ້ແກ່ຊຸມຊົນເພື່ອໃຫ້ຮັບຮູ້, ເຂົ້າໃຈ, ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ແລະ ເປັນເຈົ້າດ້ວຍຕົນເອງ;
6. ມອບໃຫ້ພະແນກສາທາລະນະສຸກແຂວງ, ຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຫ້ອງການສາທາລະນະສຸກເມືອງ 05 ເມືອງ ພາຍຫຼັງທີ່ໄດ້ຮັບການລາຍງານ ມີກໍລະນີຕິດເຊື້ອຈາກສະຖານທີ່ບໍລິການສຸຂະພາບແຕ່ລະຂັ້ນແລ້ວໃຫ້ຮີບຮ້ອນໃນການຈັດຕັ້ງປະຕິບັດລົງສອບສວນຄົນເຈັບ, ການໂຕ້ຕອບຈຸດສິ່ງເຊື້ອ ແລະ ໂຕ້ຕອບການລະບາດ ພ້ອມທັງໂຄສະນາສຸຂະສຶກສາໃຫ້ຄວາມຮູ້ແກ່ຊຸມຊົນຢ່າງທົ່ວເຖິງ;
7. ການເຄື່ອນໄຫວວຽກງານທາງການ ຫຼື ທ່ອງທ່ຽວ ຂອງບຸກຄົນ, ນິຕິບຸກຄົນ ທີ່ມີຈຸດປະສົງເຄື່ອນໄຫວ ຢູ່ຕ່າງປະເທດ ແມ່ນຈະຕ້ອງໄດ້ປະຕິບັດມາດຕະການຕ່າງໆຕາມແຈ້ງການຂອງປະເທດປາຍທາງເຊັ່ນ:ປະເທດເອຢິບ ແມ່ນຈະຕ້ອງມີເອກະສານໃບຢັ້ງຢືນການສັກຢາວັກຊີນປ້ອງກັນ ໄວຣັສ ໂປລີໂອ ( ຕາມແຈ້ງການຂອງພະແນກການຕ່າງປະເທດ ສະບັບເລກທີ 33/ພຕທ, ວັນທີ 25 ພຶດສະພາ 2026) ຫຼື ວັກຊີນອື່ນໆ ຕາມແຈ້ງການຂອງປະເທດນັ້ນໆ;
8. ມອບໃຫ້ຄະນະຄຸ້ມຄອງດ່ານສາກົນພູເກືອ ແລະ ພາກສ່ວນທີ່ກ່ຽວຂ້ອງ ເອົາໃຈໃສ່ເຂັ້ມງວດ ໃນການກວດກາຄົນເຂົ້າ-ອອກເມືອງ ພ້ອມທັງປະຕິບັດມາດຕະການໃນການປ້ອງກັນ ແລະ ຄວບຄຸມພະຍາດຢ່າງເຂັ້ມງວດ ຕໍ່ກັບຜູ້ທີ່ເດີນທາງມາຈາກຕ່າງປະເທດ ໂດຍສະເພາະເປັນປະເທດທີ່ມີການລາຍງານວ່າມີການລະບາດຂອງພະຍາດຕ່າງໆເຊັ່ນ: ທະວີບອາຟຣິກາ ໂດຍສະເພາະແມ່ນປະເທດ ກົງໂກ ແລະ ອູການດາ ເຊິ່ງເປັນປະທດທີ່ມີການລະບາດຂອງພະຍາດ

ອີໂບລາ ແລະ ພະຍາດອື່ນໆ ເພື່ອຮັບປະກັນໃນການປ້ອງກັນ ແລະ ຄວບຄຸມພະຍາດໄດ້ແຕ່ຫົວທີ, ບໍ່ໃຫ້ມີການແຜ່ລະບາດອອກໄປໃນວົງກວ້າງ;

9. ສືບຕໍ່ຈັດຕັ້ງປະຕິບັດ ໃຫ້ອາສາສະໝັກຂັ້ນບ້ານ, ພະນັກງານ, ທະຫານ, ຕຳຫຼວດ, ນັກສຶກສາ, ນັກຮຽນ ລວມທັງຊຸມຊົນ ທຸກພາກສ່ວນເຂົ້າຮ່ວມສ້າງຂະບວນການ ເພື່ອສຳຫຼວດ ແລະ ຕິດຕາມຄວາມໜາແໜ້ນ ຂອງໜອນນ້ຳຍຸງລາຍ ພ້ອມທັງທຳລາຍແຫຼ່ງເພາະພັນຂອງໜອນນ້ຳຍຸງລາຍ ໃຫ້ເປັນປົກກະຕິ, ເປັນປະຈຳ, ຮັບປະກັນໃຫ້ປະຊາຊົນມີການປ່ຽນແປງພຶດຕິກຳ ໂດຍປະຕິບັດຕາມຄຳຂວັນ 5 ປ ຄື:
   1) ປິດ ຝາພາຊະນະນ້ຳໄຊ້ໃນເຮືອນ ແລະ ນອກເຮືອນ ເພື່ອບໍ່ໃຫ້ຍຸງລາຍມາໄຂ່ໃສ່;
   2) ປ່ຽນ ນ້ຳໃນພາຊະນະເຊັ່ນ: ເຕົ້າດອກໄມ້, ນ້ຳຮອງຕີນຕູ້, ຖາດຮອງຈອກນ້ຳ;
   3) ປ່ອຍ ປາຫາງນົກຍູງ ເພື່ອກິນໜອນນ້ຳຍຸງລາຍ;
   4) ປັບປຸງ ໂດຍການອະນາໄມສິ່ງແວດລ້ອມອ້ອມເຮືອນບໍ່ໃຫ້ມີ ກະໂປະ, ກະປ໋ອງ, ຢາງຕີນລົດເກົ່າທີ່ມີນ້ຳຂັງ;
   5) ປະຕິບັດ ໃຫ້ກາຍເປັນນິໄສ ເປັນປະຈຳທຸກໆອາທິດ;

10. ມອບໃຫ້ຄະນະກຳມະການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່, ເຫດການສຸກເສີນດ້ານສາທາລະນະສຸກຂັ້ນແຂວງ-ຂັ້ນເມືອງ ປັບປຸງຄະນະກຳມະການຂັ້ນເມືອງ, ຂັ້ນຕາແສງ ແລະ ຂັ້ນບ້ານ ເພື່ອມອບໝາຍວຽກງານ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;

11. ເພື່ອເປັນການສະຫຼຸບຖອດຖອນບົດຮຽນ ໃນການຈັດຕັ້ງປະຕິບັດວຽກງານປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ໃນແຕ່ລະຂັ້ນ ຕ້ອງມີການຈັດກອງປະຊຸມດັ່ງນີ້:
   1) ຂັ້ນແຂວງ:
   - ຊ່ວງໄລຍະທີ່ກຳລັງມີການເພີ່ມຂຶ້ນຂອງພະຍາດຕິດຕໍ່ທີ່ເກີນເສັ້ນເຕືອນ ແມ່ນໃຫ້ຈັດກອງປະຊຸມດ້ານວິຊາການຢ່າງໜ້ອຍ 02ຄັ້ງ/ອາທິດ;
   - ຊ່ວງໄລຍະທີ່ມີຕົວເລກເພີ່ມຂຶ້ນເລື້ອຍມີທ່າອ່ຽງລະບາດໃນວົງກວ້າງ ກໍ່ໃຫ້ປະຕິບັດຕາມຫຼັກວິຊາການ ປະຊຸມທຸກໆວັນ ເພື່ອຊອກວິທີທາງແກ້ໄຂຢ່າງທັນການ;
   - ຖ້າສະພາບການລະບາດຂອງພະຍາດຜ່ອນຜັນລົງ ກໍ່ໃຫ້ຈັດ ທຸກໆ 03 ເດືອນ;
   2) ຂັ້ນເມືອງ:
   - ຊ່ວງໄລຍະທີກຳລັງມີການເພີ່ມຂຶ້ນຂອງພະຍາດຕິດຕໍ່ທີ່ເກີນເສັ້ນເຕືອນ ແມ່ນໃຫ້ຈັດກອງປະຊຸມດ້ານວິຊາການທຸກໆອາທິດ;
   - ຖ້າສະພາບການລະບາດຂອງພະຍາດຜ່ອນຜັນລົງ ກໍ່ໃຫ້ຈັດ ທຸກໆເດືອນ;
   3) ຂັ້ນຕາແສງ, ຂັ້ນບ້ານ: ໃຫ້ຈັດກອງປະຊຸມເປັນປະຈຳທຸກໆອາທິດ (ກອງປະຊຸມດັ່ງກ່າວຕ້ອງມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ);

12. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້ແລ້ວ ໃຫ້ທຸກພາກສ່ວນຮີບຮ້ອນຈັດຕັ້ງປະຕິບັດຜັນຂະຫຍາຍເນື້ອໃນຄຳສັ່ງສະບັບນີ້ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອເຮັດໃຫ້ວຽກງານປ້ອງກັນ ແລະ ຄວບຄຸມການລະບາດພະຍາດຕາມລະດູການ ໂດຍສະເພາະແມ່ນພະຍາດໝາກແດງ ແລະ ພະຍາດໄຂ້ຍຸງລາຍ ໃຫ້ທັນກັບສະພາບການ;

13. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານຄະນະກຳມະການປົກຄອງແຂວງ

ບ່ອນນຳສົ່ງ

| | | |
|---|---|---|
| 1. | ພະແນກການ, ອົງການທຽບເທົ່າຂັ້ນແຂວງ ກົມກອງລະ | 01 ສະບັບ; |
| 2. | ປະທານຄະນະກຳມະການປົກຄອງເມືອງ ເມືອງລະ | 01 ສະບັບ; |
| 3. | ພາກສ່ວນທີ່ກ່ຽວຂ້ອງ ພາກສ່ວນ | 01 ສະບັບ; |
| 4. | ເກັບຮັກສາໄວ້ | 01 ສະບັບ. |

ທະນູໄຊ ບັນຊາລິດ